**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

------=====0000=========------

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກົມທີ່ດິນ

ເລກທີ 4473 /ກຊສ.ກທດ

ນະຄອນຫຼວງວຽງຈັນ, ວັນທີ 17 AUG 2018

# ແຈ້ງການ

ຮຽນ : ທ່ານ ຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫລວງ.

ເລື່ອງ: ການເຊັນໃບຕາດິນ, ໃບທະບຽນທີ່ດິນ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ.

ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີການ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 3159/ກຊສ, ລົງວັນທີ 01 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມທີ່ດິນ;

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 4368/ກຊສ, ລົງວັນທີ 14 ສິງຫາ 2018 ວ່າດ້ວຍ ການເຊັນໃບຕາດິນ ແລະ ໃບທະບຽນທີ່ດິນ;
- ອີງຕາມ ແຈ້ງການ ຂອງກົມຈັດຕັ້ງ ສະບັບເລກທີ 0694/ກຊສ.ກຈຕ, ລົງວັນທີ 19 ມີນາ 2018 ວ່າດ້ວຍ ກ່ຽວກັບການນຳໃຊ້ກາປະທັບ ຂອງທຸກຂະແໜງທີ່ສັງກັດຢູ່ ພະແນກ ຊສ ແຂວງ/ນະຄອນຫຼວງວຽງຈັນ;
- ອີງຕາມ ການຄົ້ນຄ້ວາ ແລະ ຄວາມເປັນເອກະພາບຂອງກອງປະຊຸມພາຍໃນກົມທີ່ດິນຄັ້ງວັນທີ 15/08/2018.

ກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດແຈ້ງການແນະນຳມາຍັງ ທ່ານ ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫລວງ ກ່ຽວກັບການເຊັນໃບຕາດິນ, ໃບທະບຽນທີ່ດິນ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ ຊຶ່ງມີດັ່ງນີ້:

1. ໃຫ້ຫົວໜ້າ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເປັນຜູ້ລົງລາຍເຊັນໃສ່ໃບຕາດິນ ແລະ ໃບທະບຽນທີ່ດິນ ໂດຍໃຊ້ກາປະທັບປຽກ ແລະ ກາປະທັບດິບ;
2. ໃຫ້ຫົວໜ້າ ຫຼື ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເຊັນໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ.

3. ໃບຕາດິນ ແລະ ໃບທະບຽນທີ່ດິນທີ່ໄດ້ພິມອອກມາແລ້ວ (ມີສອງລາຍເຊັນ) ທີ່ຍັງຄ້າງຢູ່ຂັ້ນເມືອງ ແລະ ຂັ້ນພະແນກ ແມ່ນໃຫ້ພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ ສືບຕໍ່ແກ້ໄຂເຊັນໃຫ້ສຳເລັດ ບໍ່ໃຫ້ກາຍວັນທີ 31 ສິງຫາ 2018 ແລະ ໃຫ້ຢຸດພິມໃບຕາດິນ ແລະ ໃບທະບຽນທີ່ດິນທີ່ມີສອງລາຍເຊັນ.

4. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ ພ້ອມທັງເຜີຍແຜ່ເນື້ອໃນແຈ້ງການ ໃຫ້ແກ່ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບຢ່າງທົ່ວເຖິງ.

ລາຍລະອຽດມີຕົວຢ່າງແບບພິມໃບຕາດິນ ແລະ ໃບທະບຽນທີ່ດິນຄັດຕິດມາພ້ອມນີ້

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດເປັນຢ່າງດີ.

**ຫົວໜ້າກົມ**

ວົງເດືອນ ວົງສີຫາລາດ

<u>ບ່ອນສົ່ງ:</u>

| | |
|---|---|
| - ລັດຖະມົນຕີ, ຮອງລັດຖະມົນຕີ ກຊສ | 1 ສະບັບ "ເພື່ອຊາບ" |
| - ພຊສ ແຂວງ, ນະຄອນຫລວງ | 1 ສະບັບ "ເພື່ອຮັບຊາບ ແລະ ປະຕິບັດ" |
| - ເກັບມ້ຽນ | 3 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
====0000====

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 4368/ກຊສ
ນະຄອນຫຼວງວຽງຈັນ, ວັນທີ 14.08.2018

# ຂໍ້ຕົກລົງ

## ວ່າດ້ວຍການເຊັນໃບຕາດິນ ແລະ ໃບທະບຽນທີ່ດິນ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີມົນຕີ ສະບັບເລກທີ 145/ນຍ, ລົງວັນທີ 08/05/2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ;
- ອີງຕາມ ດຳລັດຂອງ ນາຍົກລັດຖະມົນຕີມົນຕີ ສະບັບເລກທີ 218/ນຍ, ລົງວັນທີ 19/07/2005, ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ກາປະທັບ ;
- ອີງຕາມ ການຕົກລົງເຫັນດີຂອງຄະນະປະຈຳພັກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຄັ້ງວັນທີ 16/03/2018.
- ອີງຕາມ ໃບສະເໜີຂອງກົມທີ່ດິນ ສະບັບເລກທີ 4353/ກຊສ.ກທດ ລົງວັນທີ 06/08/2018 ກ່ຽວກັບການເຊັນໃບຕາດິນ ແລະ ໃບທະບຽນທີ່ດິນ.

### ລັດຖະມົນຕີ ຕົກລົງ:

**ມາດຕາ 1**: ປັບປຸງຂັ້ນຕອນການຢັ້ງຢືນ ການອອກໃບຕາດິນ ແລະ ໃບທະບຽນທີ່ດິນ ໃຫ້ສອດຄ່ອງກັບດຳລັດຂອງນາຍົກລັດຖະມົນຕີມົນຕີ ສະບັບເລກທີ 218/ນຍ, ລົງວັນທີ 19/07/2005 ໂດຍມອບໃຫ້ທ່ານ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງເປັນຜູ້ລົງລາຍເຊັນໃສ່ໃບຕາດິນ ແລະ ໃບທະບຽນທີ່ດິນ.

**ມາດຕາ 2**: ມອບໃຫ້ກົມທີ່ດິນ ອອກແຈ້ງການແນະນຳເຖິງບັນດາພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ/ນະຄອນຫຼວງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 3**: ໃຫ້ການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4**: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສົມມາດ ພົລເສນາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------- ===000=== --------

ແຂວງ/ນະຄອນ...............

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ .............../ພຊສ...

ລົງວັນທີ ......./......./........

# ໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນ

- ອີງຕາມ ຂໍ້ຕົກລົງຂອງ ລັດຖະມົນຕີກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະບັບເລກທີ 3171/ກຊສ, ລົງວັນທີ 01 ສິງຫາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນຫຼວງວຽງຈັນ.
- ອີງຕາມ ໃບສະເໜີເລກທີ ...................................., ລົງວັນທີ ....../................/...........................

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນ...................ໄດ້ກວດກາຄວາມຖືກຕ້ອງຂອງຕາມໃບຕາດິນ ໂດຍສົມທົບໃສ່ອົງປະກອບຕ່າງໆຂອງການຂຶ້ນທະບຽນອອກໃບຕາດິນ ຫຼື ການປ່ຽນແປງ ແລະ ການເຄື່ອນໄຫວສິດນຳໃຊ້ທີ່ດິນ ເຫັນວ່າທີ່ດິນຕອນດັ່ງກ່າວບໍ່ໄດ້ນຳໃຊ້ເຂົ້າໃນເປົ້າໝາຍໃດມາກ່ອນ, ບໍ່ມີຄຳສັ່ງອາຍັດຊັບ, ບໍ່ມີຂໍ້ຂັດແຍ່ງ ແລະ ຂໍ້ຄັດຄານໃດໆ.

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນ............... ຈຶ່ງອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນສະບັບເລກທີ.........................ລົງວັນທີ......./......../.........ອອກຄັ້ງທີ................. ໂດຍອອກຊື່:ທ້າວ/ນາງ.........................ເມືອງ...................ແຂວງ/ນະຄອນ....................ທີ່ດິນຕອນນີ້ຕັ້ງຢູ່ໜ່ວຍ...........ບ້ານ...................ເມືອງ........................ແຂວງ/ນະຄອນ..................ປຶ້ມທະບຽນທີ່ດິນເຫຼັ້ມທີ...............ໃບທີ...................ແຜນທີ່ຕາດິນເລກທີ.....................,ຕອນດິນເລກທີ............. ເນື້ອທີ່...............ຕາແມັດ.

- ການໄດ້ມາຂອງສິດນຳໃຊ້ທີ່ດິນ: ສືບມູນ □, ມອບ-ໂອນ □, ທັນສິດ □, ປ່ຽນປະເພດ □, ແລກປ່ຽນ □, ຊື້ສິດນຳໃຊ້ທີ່ດິນ ແລະ ອື່ນໆ........................
- ຖານະຄວາມເປັນເຈົ້າຂອງ: ສິນສົມສ້າງ □, ຂັບເດີມ □, ກຳມະສິດຮ່ວມ □, ນິຕິບຸກຄົນ □, ແລະ ອື່ນໆ................
- ປະເພດທີ່ດິນ..............................................ເຂດ....................................................
- ໃບຢັ້ງຢືນສະບັບນີ້ໄດ້ອອກໃຫ້ແກ່.......................................................................................
- ເພື່ອນຳໃຊ້ເຂົ້າໃນ: ເຊົ່າ □, ຈຳນອງ □, ສືບມູນ □, ແບ່ງແຍກ □, ລວມຕອນ □, ມອບ-ໂອນ □, ປ່ຽນພະເພດ □, ແລກປ່ຽນ □, ແລະ ອື່ນໆ......................

ດັ່ງນັ້ນ, ຈຶ່ງໄດ້ອອກໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນສະບັບນີ້ ໃຫ້ຜູ້ກ່ຽວເພື່ອອ້າງອີງເປັນຫຼັກຖານ.

ຫົວໜ້າພະແນກ

ໝາຍເຫດ:

ຫຼັງຈາກໄດ້ຮັບໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນນີ້ແລ້ວ ເຈົ້າຂອງໃບຕາດິນ ຫຼື ຄູ່ກໍລະນີ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຕ້ອງນຳໃບຢັ້ງຢືນຄວາມຖືກຕ້ອງຂອງໃບຕາດິນນີ້ ສະບັບນີ້ໄປເຮັດສັນຍາ ຫຼື ນິຕິກຳທີ່ກ່ຽວກັບທີ່ດິນ ນຳສຳນັກງານທະບຽນສານ ຫຼື ນາຍບ້ານ ບ່ອນທີ່ດິນຕັ້ງຢູ່ ແລ້ວຈຶ່ງນຳສັນຍາ ຫຼື ນິຕິກຳດັ່ງກ່າວ ມາແຈ້ງຈົດທະບຽນນຳ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນ ຫຼື ຂະແໜງທີ່ດິນ, ເພື່ອບັນທຶກເຂົ້າໃນປຶ້ມຈົດທະບຽນນິຕິກຳກ່ຽວກັບທີ່ດິນ ຈຶ່ງຈະຮັບຮູ້ ຢ່າງເປັນທາງການ ແລະ ມີຜົນສັກສິດໃນທາງກົດໝາຍ. ສັນຍາ ຫຼື ນິຕິກຳກ່ຽວກັບທີ່ດິນໃດບໍ່ໄດ້ຮັບການຈົດທະບຽນນຳ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ/ນະຄອນ ແລະ ຂະແໜງທີ່ດິນ ຖ້າມີບັນຫາຫຍັງເກີດຂຶ້ນຕາມມາ ກໍຈະບໍ່ຖືກຮັບຮູ້ຈາກ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງທີ່ດິນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ພະແນກຊັບພະຍາກອນທຳມະຊາດ ແລະ

ສິ່ງແວດລ້ອມປະຈຳແຂວງ/ນະຄອນ

ເລກທີ : ____________________

ອອກຄັ້ງທີ : ____________________

# ໃບຕາດິນ

## ບຸກຄົນ, ນິຕິບຸກຄົນ

ທີ່ຕັ້ງຕອນດິນ : ________________

ແຂວງ : ________________

ເມືອງ : ________________

ບ້ານ : ________________

ໜ່ວຍ : ________________

ອອກໃຫ້ແກ່ : ____________________________________________________________

ວັນເດືອນປີເກີດ : ____________________ ສັນຊາດ : ____________________ ອາຊີບ : ____________________

ທີ່ຢູ່ປັດຈຸບັນ : ________________ ໜ່ວຍ: ________________ ເມືອງ: ________________ ແຂວງ: ________________

ຊື່ຜົວຫຼືເມຍ : ________________________________ ວັນເດືອນປີເກີດ : ____________________

ສັນຊາດ : ________________________________ ອາຊີບ : ____________________

ການໄດ້ມາຂອງສິດນຳໃຊ້ທີ່ດິນ : ____________________________________________

ຖານະເປັນເຈົ້າຂອງສິດນຳໃຊ້ທີ່ດິນ : ____________________________________________

ປະເພດທີ່ດິນ : ________________________________ ເຂດ : ____________________

ປຶ້ມທະບຽນທີ່ດິນເຫຼັ້ມທີ : ____________ ໃບທີ : ________________ ແຜນທີ່ຕາດິນເລກທີ : ________________

ຕອນດິນເລກທີ : ________________ ເນື້ອທີ່ດິນ : ________________ ຕາແມັດ, ມາດຕາສ່ວນ : ____________

## ແຜນທີ່ຕອນດິນ




ວັນທີ : ______________________________

ຫົວໜ້າພະແນກ